ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 0387 /ອຄ.ບຄຕ
ນະຄອນຫຼວງວຽງຈັນ, ວັນທີ 02 APR 2018

# ຂໍ້ຕົກລົງ
# ວ່າດ້ວຍ
# ການກຳນົດສິດ ແລະ ໜ້າທີ່ ແລະ ລະບອບແບບແຜນວິທີເຮັດວຽກຂອງ ໜ່ວຍງານຄຸ້ມຄອງສູນ ແລະ ຈຸດປະສານງານໃນການສະໜອງ ຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມດຳລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ ລົງວັນທີ 18 ສິງຫາ 2010.
- ອີງຕາມ ໜັງສືສະເໜີຂອງກົມນະໂຍບາຍການຄ້າຕ່າງປະເທດ ສະບັບເລກທີ 0593/ກນຄຕ.ນກ, ລົງວັນທີ 26 ກໍລະກົດ 2017

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດສິດ, ໜ້າທີ່ ແລະ ລະບອບແບບແຜນວິທີເຮັດວຽກ ຂອງໜ່ວຍງານຄຸ້ມຄອງ ສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ແລະ ຈຸດປະສານງານໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ແນ່ໃສ່ຮັບປະກັນການສະໜອງຂໍ້ມູນຂ່າວສານທີ່ຕິດພັນກັບການຄ້າດ້ານບໍລິການ. ໃຫ້ທັນກັບສະພາບການ, ວ່ອງໄວ ແລະ ມີຄວາມຖືກຕ້ອງຄົບຖ້ວນ ປະກອບສ່ວນໃນການຊຸກຍູ້ສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວຜ່ານລະບົບອີເລັກໂທຣນິກໃຫ້ແກ່ທັງພາກລັດ, ພາກທຸລະກິດ ແລະ ສາທາລະນະຊົນ.

ມາດຕາ 2 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ແມ່ນມີຄວາມໝາຍດັ່ງນີ້:

2.1 ການສະໜອງຂໍ້ມູນ ໝາຍເຖິງ: ການຕອບຄໍາຖາມ ແລະ ການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ຕາມທີ່ກໍານົດໄວ້ຢູ່ໃນ ຂໍ້ 2.3 ຂອງ ຂໍ້ຕົກລົງສະບັບນີ້ ໃຫ້ກັບໜ່ວຍງານຄຸ້ມຄອງສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ (ຂຽນຫຍໍ້ແມ່ນ "ຄສຄບ");

2.2 ໜ່ວຍງານຄຸ້ມຄອງສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ຫຼື ຄສຄບ ໝາຍເຖິງ: ໜ່ວຍງານທີ່ປະຈໍາຢູ່ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງ ອຸດສາຫະກໍາ ແລະ ການຄ້າ;

2.3 ຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ໝາຍເຖິງ: ບັນດາກົດໝາຍ, ຂໍ້ຕົກລົງ, ສັນຍາການຄ້າດ້ານບໍລິການໃນແຕ່ລະຂອບການຮ່ວມມື, ລະບຽບການ, ແຈ້ງການ, ມາດຕະການ, ຂັ້ນຕອນ ແລະ ແບບຟອມຕ່າງໆ ທີ່ກ່ຽວຂ້ອງ, ລວມທັງຄໍາສັ່ງແນະນໍາຕ່າງໆ ທີ່ຖືກຮັບຮອງ ແລະ ນໍາໃຊ້ໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ຍັງລວມມີຂ່າວສານ, ບົດຂ່າວ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບການຄ້າດ້ານບໍລິການ ລວມໄປເຖິງຂໍ້ມູນ ທີ່ເປັນຮູບພາບເໜັງຕີງ, ສຽງ, ວີດີໂອ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 2 ຂອງ ດໍາລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ.

ມາດຕາ 3 ຈຸດປະສານງານໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ

ຈຸດປະສານງານໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການຂຽນຫຍໍ້ແມ່ນ "ຈສຄບ". ຈສຄບ ປະກອບດ້ວຍຜູ້ຕາງໜ້າ ຈາກບັນດາກະຊວງ ແລະ ຂະແໜງການທີ່ກ່ຽວຂ້ອງຕາມເອກະສານຊ້ອນທ້າຍ (ກ) ເຊິ່ງເປັນສ່ວນໜຶ່ງຂອງຂໍ້ຕົກລົງສະບັບນີ້.

## ໝວດທີ II
## ສິດ ແລະ ໜ້າທີ່

ມາດຕາ 4 ສິດ ແລະ ໜ້າທີ່ຂອງ ຈສຄບ

ຈສຄບ ມີສິດ ແລະ ໜ້າທີ່ດັ່ງນີ້:

4.1 ແຕ່ງຕັ້ງພະນັກງານທີ່ສັງກັດຢູ່ກົມກອງຂອງຕົນ ເພື່ອສ້າງເປັນຈຸດປະສານງານໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

4.2 ສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ຕາມທີ່ກໍານົດໄວ້ ໃນຂໍ້ 2.3 ຂອງ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້;

4.3 ປະສານງານໂດຍກົງ ແລະ ຕໍ່ເນື່ອງກັບ ຄສຄບ ເພື່ອສະໜອງຂໍ້ມູນຂ່າວສານ ແລະ ຕິດຕາມການປັບປຸງຂໍ້ມູນຂ່າວສານ;

4.4 ເຂົ້າຮ່ວມກອງປະຊຸມ, ສໍາມະນາ ແລະ ຝຶກອົບຮົມຕ່າງໆທີ່ກ່ຽວຂ້ອງກັບວຽກງານການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

4.5 ຕິດຕາມກວດກາຄວາມຖືກຕ້ອງ ແລະ ສອດຄ່ອງຂອງຂໍ້ມູນຂ່າວສານ ທີ່ຖືກເຜີຍແຜ່ລົງໃນເວັບໄຊ້ດັ່ງກ່າວເປັນປະຈໍາ. ຖ້າວ່າຂໍ້ມູນ ທີ່ລົງໃນເວັບໄຊ້ນັ້ນຫາກບໍ່ຖືກຕ້ອງ, ບໍ່ສອດຄ່ອງ ຫຼື ຂາດຫາຍໄປ ຕ້ອງ

ແຈ້ງໃຫ້ ຄສຄບ ຊາບທັນທີ ລວມທັງຂໍ້ມູນທີ່ບໍ່ໄດ້ຖືກນຳໃຊ້ຕໍ່ໄປແລ້ວ ເພື່ອພ້ອມກັນປັບປຸງໃຫ້ທັນກັບສະພາບການ;

4.6 ກວດກາຄວາມຖືກຕ້ອງ ແລະ ບໍ່ຖືກຕ້ອງຂອງຂໍ້ມູນຂ່າວສານ ທີ່ສະໜອງໃຫ້ກັບໜ່ວຍງານຄຸ້ມຄອງສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

4.7 ຕອບຄຳຖາມຕ່າງໆ ທີ່ໄດ້ຮັບຈາກ ຄສຄບ ແລະ ແຈ້ງຄືນໃຫ້ໜ່ວຍງານດັ່ງກ່າວຮັບຊາບກ່ຽວກັບຄວາມຄືບໜ້າຂອງການຕອບແຕ່ລະຄຳຖາມ. ພາຍຫຼັງ ທີ່ຕົນຕອບຄຳຖາມແລ້ວ, ຕ້ອງສົ່ງຄຳຕອບໃຫ້ກັບໜ່ວຍງານດັ່ງກ່າວເພື່ອໃຫ້ ຄສຄບ ແຈ້ງຕອບຕໍ່ຜູ້ຊົມໃຊ້ເວັບໄຊ້ທີ່ກ່ຽວ ຂ້ອງ; ແລະ

4.8 ປະຕິບັດ ສິດ ແລະ ໜ້າທີ່ ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 5 ສິດ ແລະ ໜ້າທີ່ຂອງ ຄສຄບ

ຄສຄບ ມີສິດ ແລະ ໜ້າທີ່ດັ່ງນີ້:

5.1 ແຕ່ງຕັ້ງພະນັກງານທີ່ສັງກັດຢູ່ກົມກອງຂອງຕົນ ເພື່ອສ້າງເປັນໜ່ວຍງານໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

5.2 ເຮັດໜ້າທີ່ສັງລວມ ແລະ ເກັບກຳຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ຕາມທີ່ກຳນົດໄວ້ໃນຂໍ້ 2.3 ຂອງ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ຈາກ ຈສຄບ. ປະສານງານໂດຍກົງ ແລະ ຕໍ່ເນື່ອງກັບ ຈສຄບ ເພື່ອປະສານເອົາຂໍ້ມູນຂ່າວສານ;

5.3 ເຮັດໜ້າທີ່ບັນທຶກ, ສະໜອງ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ຕາມທີ່ກຳນົດໄວ້ໃນຂໍ້ 2.3 ຂອງ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ທີ່ສັງລວມ ແລະ ເກັບກຳໄດ້ ຈາກ ຈສຄບ ໃຫ້ແກ່ພາກລັດ, ທຸລະກິດ ແລະ ສາທາລະນະຊົນ ລົງຜ່ານເວັບໄຊ້: www.laoservicesportal.gov.la ຊຶ່ງມີໜ່ວຍງານຄຸ້ມຄອງປະຈຳຢູ່ທີ່ ກົມນະໂຍບາຍການຄ້າຕ່າງປະເທດ; ກະຊວງອຸດສາຫະກຳ ແລະ ການຄ້າ

5.4 ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມຕ່າງໆທີ່ກ່ຽວຂ້ອງກັບວຽກງານການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

5.5 ປະສານງານໂດຍກົງກັບ ຈສຄບ ເປັນແຕ່ລະໄລຍະ ກ່ຽວກັບຄວາມບໍ່ຖືກຕ້ອງ ຫຼື ການຂາດຫາຍໄປຂອງຂໍ້ມູນທີ່ເອົາລົງເຜີຍແຜ່ໃນສູນຂໍ້ມູນຂ່າວສານ ລວມທັງຂໍ້ມູນທີ່ບໍ່ໄດ້ຖືກນຳໃຊ້ຕໍ່ໄປແລ້ວ;

5.6 ກວດກາຄືນຄວາມຖືກຕ້ອງ ແລະ ບໍ່ຖືກຕ້ອງຂອງຂໍ້ມູນຂ່າວສານ ທີ່ສະໜອງໃຫ້ໂດຍ ຈສຄບ;

5.7 ສັງລວມຄຳຖາມ ແລະ ຂໍ້ຂ້ອງໃຈ ຂອງຜູ້ເຂົ້າຊົມໃຊ້ເວັບໄຊ້ດັ່ງກ່າວ ແລ້ວສົ່ງໃຫ້ ຈສຄບ ທີ່ກ່ຽວຂ້ອງທັນທີ ນັບແຕ່ມື້ທີ່ໄດ້ຮັບຄຳຖາມ;

5.8 ຕິດຕາມ, ສັງລວມເອົາຄຳຕອບ ຕໍ່ຄຳຖາມ ທີ່ຕົນໄດ້ສົ່ງໄປນັ້ນ ຈາກ ຈສຄບ ທີ່ກ່ຽວຂ້ອງ;

5.9 ພາຍຫຼັງໄດ້ຮັບຄຳຕອບ ຈາກ ຈສຄບ ທີ່ກ່ຽວຂ້ອງແລ້ວ, ຄສຄບ ຕ້ອງສົ່ງຄຳຕອບໃຫ້ແກ່ເຈົ້າຂອງຄຳຖາມ ຫຼື ຜູ້ເຂົ້າຊົມໃຊ້ເວັບໄຊ້ທີ່ກ່ຽວຂ້ອງ ທັນທີນັບແຕ່ວັນທີ່ໄດ້ຮັບຄຳຕອບຈາກ ຈສຄບ ທີ່ກ່ຽວຂ້ອງ; ແລະ ປະຕິບັດສິດ ແລະ ໜ້າທີ່ ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ລະບອບແບບແຜນວິທີເຮັດວຽກ

### ມາດຕາ 6 ແບບແຜນວິທີເຮັດວຽກຂອງ ຈສຄບ

ຈສຄບ ມີແບບແຜນວິທີເຮັດວຽກດັ່ງນີ້:

6.1 ມີການປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີ ຫຼື ຕາມການສະເໜີຂອງ ຈສຄບ ໃດໜຶ່ງ;

6.2 ໃນກໍລະນີທີ່ມີການອອກນິຕິກໍາໃໝ່, ປັບປຸງ ຫຼື ປັບປຸງຂໍ້ມູນຂ່າວສານທີ່ຕິດພັນກັບຂະແໜງການທີ່ກ່ຽວຂ້ອງ, ຈສຄບ ທີ່ກ່ຽວຂ້ອງຕ້ອງສະໜອງຂໍ້ມູນຂ່າວສານດັ່ງກ່າວ ໃຫ້ ຄສຄບ ພາຍໃນ 15 ວັນລັດຖະການນັບແຕ່ມື້ມີຜົນບັງຄັບໃຊ້;

6.3 ການສະໜອງຂໍ້ມູນຕ້ອງຢູ່ໃນຮູບແບບອີເລັກໂທຣນິກ (Electronic Format) ແລະ ດໍາເນີນການສົ່ງຜ່ານທາງອີເມວມາຍັງທີ່ຢູ່ (contact@laoservicesportal.gov.la) ເພື່ອຄວາມສະດວກໃນການຮັບ ແລະ ບັນທຶກຂໍ້ມູນດັ່ງກ່າວລົງໃນສູນຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ;

6.4 ຈສຄບ ຕ້ອງລາຍງານ ແລະ ຂໍທິດຊີ້ນໍາຈາກຂັ້ນເທິງຂອງຕົນເປັນແຕ່ລະໄລຍະ ກ່ຽວກັບການຈັດຕັ້ງປະຕິບັດການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ທີ່ຕິດພັນກັບຂະແໜງການຂອງຕົນລວມທັງການຕອບຄໍາຖາມຂອງສາທາລະນະຊົນຕາມແຕ່ລະໄລຍະ.

### ມາດຕາ 7 ແບບແຜນວິທີເຮັດວຽກ ຂອງ ຄສຄບ

ຄສຄບ ມີແບບແຜນວິທີເຮັດວຽກດັ່ງນີ້:

7.1 ມີການປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີ ຫຼື ຕາມການສະເໜີຂອງ ຈສຄບ ໃດໜຶ່ງ;

7.2 ຕ້ອງບັນທຶກຂໍ້ມູນທັງໝົດທີ່ໄດ້ຮັບຈາກ ຈສຄບ ລົງໃນເວບໄຊ໌: www.laoservicesportal.gov.la ພາຍໃນ 5 ວັນລັດຖະການນັບແຕ່ແຕ່ວັນທີໄດ້ຮັບຂໍ້ມູນຈາກ ຈສຄບ; ແລະ ຄສຄບ ຕ້ອງລາຍງານ ແລະ ຂໍທິດຊີ້ນໍາຈາກຂັ້ນເທິງຂອງຕົນເປັນແຕ່ລະໄລຍະກ່ຽວກັບການຈັດຕັ້ງປະ ຕິບັດ ການລົງຂໍ້ມູນຂ່າວສານທາງດ້ານການຄ້າດ້ານບໍລິການ ທີ່ຕົນໄດ້ຮັບລວມທັງການຕອບຄໍາຖາມຂອງສາທາລະນະຊົນເປັນປະຈໍາແຕ່ລະໄລຍະ.

### ມາດຕາ 8 ວິທີການແກ້ໄຂບັນຫາ

ໃນກໍລະນີການປະສານງານລະຫວ່າງ ຈສຄບ ແລະ ຄສຄບ ຫາກພົບຄວາມຫຍຸ້ງຍາກ ແລະ ເປັນສາເຫດເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໄດ້ ແມ່ນໃຫ້ ຄສຄບ ລາຍງານໃຫ້ກັບ ຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສະຫະກໍາ ແລະ ການຄ້າ ໄດ້ຮັບຊາບ ເພື່ອຂໍທິດຊີ້ນໍາ ແລະ ວິທີທາງແກ້ໄຂຕາມເຫັນສົມຄວນ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມນະໂຍບາຍການຄ້າຕ່າງປະເທດ ໂດຍປະສານສົມທົບກັບຈຸດປະສານງານທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

<u>ສຳເນົາສົ່ງ:</u>

1. ຈຸດປະສານງານບ່ອນລະ — 1 ສະບັບ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ
2. ເກັບມ້ຽນ — 2 ສະບັບ

## <u>ເອກະສານຊ້ອນທ້າຍ (ກ)</u>

ລາຍຊື່ຂອງ ຈສຄບ ຈາກພາກສ່ວນທີ່ກ່ຽວຂ້ອງ

- ❖ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
- ❖ ກົມກົງສຸນ, ກະຊວງການຕ່າງປະເທດ
- ❖ ກົມອາຊຽນ, ກະຊວງການຕ່າງປະເທດ
- ❖ ກົມທະບຽນ ແລະຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ
- ❖ ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ
- ❖ ຫ້ອງການ, ກະຊວງໂຍທາທິການ ແລະ ຂົນສົ່ງ
- ❖ ກົມການບິນພົນລະເຮືອນ, ກະຊວງໂຍທາທິການແລະຂົນສົ່ງ
- ❖ ກົມແຜນການ ແລະ ການຮ່ວມມື, ກະຊວງໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ
- ❖ ກົມໂທລະຄົມ, ກະຊວງໄປສະນີ ໂທລະຄົມມະນາຄົມ ແລະການສື່ສານ
- ❖ ຫ້ອງການ, ກະຊວງສາທາລະນະສຸກ
- ❖ ກົມແຜນການ-ການເງິນ ກະຊວງຖະແຫລງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ
- ❖ ກົມຄຸ້ມຄອງການທ່ອງທ່ຽວ ກະຊວງຖະແຫລງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ
- ❖ ກົມໂຄສະນາການທ່ອງທ່ຽວ, ກະຊວງຖະແຫລງຂ່າວ ວັດທະນາທຳ ແລະ ທ່ອງທ່ຽວ
- ❖ ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ
- ❖ ກົມນະໂຍບາຍການເງິນ, ກະຊວງການເງິນ
- ❖ ກົມພາສີ, ກະຊວງການເງິນ
- ❖ ຫ້ອງການ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
- ❖ ຫ້ອງການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
- ❖ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ❖ ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ❖ ຫ້ອງການ, ກະຊວງຍຸຕິທຳ
- ❖ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ
- ❖ ຫ້ອງການ, ກະຊວງພາຍໃນ
- ❖ ຫ້ອງການ, ກະຊວງປ້ອງກັນຄວາມສະຫງົບ
- ❖ ກົມນະໂຍບາຍ ແລະ ແຜນພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
- ❖ ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້
- ❖ ຫ້ອງການ, ທະນາຄານແຫ່ງ ສປປ ລາວ
- ❖ ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
- ❖ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ